**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມພາສີ

ເລກທີ 05147 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລ 2021

# ແຈ້ງການ

ເຖິງ: **- ທ່ານຫົວໜ້າພະແນກການກົມພາສີ**

**- ທ່ານຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງ**

**- ທ່ານຫົວໜ້າດ່ານພາສີສາກົນ ໃນຂອບເຂດທົ່ວປະທດ**

ເລື່ອງ: **ການຈັດຕັ້ງປະຕິບັດຜົນການສຶກສາເວລາກວດປ່ອຍສິນຄ້າ TRS 2020**

- ອີງຕາມ ຂໍ້ຕົກລົງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບສຶກສາເວລາໃນການກວດປ່ອຍສິນຄ້າ (Time Release Study) ປະຈຳປີ 2020, ສະບັບ ເລກທີ 0729/ຄອຄສ, ລົງວັນທີ 10 ສິງຫາ 2020;
- ອີງຕາມ ບົດລາຍງານການສຶກສາເວລາກວດປ່ອຍສິນຄ້າ ປະຈຳປີ 2020;

ກົມພາສີ ໄດ້ສົມທົບກັບກອງເລຂາຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າ ດຳເນີນການສຶກສາເວລາກວດປ່ອຍສິນຄ້າ ປະຈຳປີ 2020 ເພື່ອປະເມີນສະພາບຂໍ້ສະດວກຂໍ້ຫຍຸ້ງຍາກໃນການແຈ້ງພາສີ ແລະ ການກວດປ່ອຍສິນຄ້າຢູ່ບັນດາດ່ານພາສີສາກົນ, ເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າປັບປຸງຂັ້ນຕອນການແຈ້ງພາສີ ໃຫ້ກະທັດຮັດ, ສະດວກ ແລະ ວ່ອງໄວ ຂຶ້ນເທື່ອລະກ້າວ.

ຜົນການສຶກສາເວລາກວດປ່ອຍສິນຄ້າ ປະຈຳປີ 2020 ສະແດງໃຫ້ເຫັນວ່າເວລາລວມຂອງການແຈ້ງພາສີ ແລະ ການກວດປ່ອຍສິນຄ້າຫຼຸດລົງ. ແຕ່ກໍ່ເຫັນວ່າຍັງມີຫຼາຍຈຸດຕ້ອງໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ, ກົມພາສີ ຈຶ່ງອອກແຈ້ງການໃຫ້ປະຕິບັດ ດັ່ງນີ້:

1. ມອບໃຫ້ບັນດາພະແນກການກົມພາສີ ໂດຍສະເພາະແມ່ນ ພະແນກນິຕິກຳ, ພະແນກບໍລິຫານຄວາມສ່ຽງ ແລະ ຄຸ້ມຄອງການແຈ້ງພາສີ, ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະ ແຜນການ ເປັນຕົ້ນ ໃຫ້ສຸມໃສ່ຄົ້ນຄວ້າປັບປຸງລະບຽບການກ່ຽວກັບການແຈ້ງພາສີ, ການບໍລິການຄວາມສ່ຽງ ແລະ ລະບົບແຈ້ງພາສີເອເລັກໂຕຣນິກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ສູງຂຶ້ນກວ່າເກົ່າ.
2. ມອບໃຫ້ພາສີປະຈຳແຂວງ, ນະຄອນຫຼວງ ຕິດຕາມກວດກາ ການປະຕິບັດວຽກງານວິຊາສະເພາະຂອງດ່ານພາສີຊາຍແດນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນການຄຸ້ມຄອງການແຈ້ງພາສີ ແລະ ກວດປ່ອຍສິນຄ້າໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ຍົກສູງການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ.

3. ມອບໃຫ້ດ່ານພາສີສາກົນໃນຂອບເຂດທົ່ວປະເທດ ເປັນເຈົ້າການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຂັ້ນຕອນການແຈ້ງພາສີໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ຍົກສູງນໍ້າໃຈໃຫ້ບໍລິການດ້ວຍຄວາມສັດຊື່, ບໍລິສຸດ ແລະ ໂປ່ງໃສ.

**ຫົວໜ້າກົມ**

ພູເຂົາຄໍາ ວັນນະວົງໄຊ

ເອກະສານຄັດຕິດ:

- ບົດລາຍງານການສຶກສາເວລາກວດປ່ອຍສິນຄ້າ ຢູ່ ສປປ ລາວ ປີ 2020